**JESUS 316**

# ພຣະເຢຊູແມ່ນໃຜ?

**ພຣະເຢຊູແມ່ນໃຜ?** ມີພຽງພຣະຄຳພີເທົ່ານັ້ນທີ່ໃຫ້ຄຳຕອບທີ່ແທ້ຈິງກັບຄຳຖາມນັ້ນ. ອັກຄະສາວົກໂປໂລຂຽນໄວ້ວ່າ, *"ພຣະຄຳພີທຸກຕອນໄດ້ຮັບການຊົງບັນດົນໃຈ* [ບັນດານໃຈ] *ຈາກພຣະເຈົ້າ,"* 2 ຕີໂມທຽວ 3:16. ພຣະຄຳພີທີ່ພຣະເຈົ້າໄດ້ຊົງບັນດົນໃຈ ຕັ້ງແຕ່ປະຖົມມະການ ຈົນເຖິງພຣະນິມິດ, ສອນວ່າພຣະເຢຊູຊົງເປັນພຣະເຈົ້າ ຕັ້ງແຕ່ອະດີດ ຈົນເຖິງອະນາຄົດອັນນິຣັນດອນ. ພຣະຄຳພີຊົງປະກາດວ່າພຣະອົງຊົງເປັນ *"ອາລະຟາ ແລະ ໂອເມຄາ ອົງຊົງດຳລົງຢູ່ໃນປະຈຸບັນ, ອົງຊົງດຳລົງຢູ່ໃນອະດີດ ແລະ ຜູ້ທີ່ຈະສະເດັດມາໃນອະນາຄົດ,"* ພຣະນິມິດ 1:8 ພຣະຄຳພີໄດ້ລະບຸວ່າ ພຣະເຢຊູຊົງເປັນພຣະເຈົ້າ, ພຣະຜູ້ສ້າງ, ພຣະຜູ້ລ້ຽງແກະທີ່ຍິ່ງໃຫຍ່, ພຣະເຈົ້າ, ພຣະຜູ້ໄຖ່, ລູກແກະຂອງພຣະເຈົ້າ, ພຣະເຈົ້າເໜືອພະທັງຫຼາຍ, ກະສັດເໜືອກະສັດ, ເອມານູເອນ (ພຣະເຈົ້າຜູ້ຢູ່ກັບເຮົາ), ພຣະຜູ້ຊ່ວຍໃຫ້ລອດ, ມະຫາປະໂລຫິດ, ແລະການຟື້ນຄືນພຣະຊົນ ແລະ ມີຊີວິດ.

**ພຣະເຢຊູຄືພຣະຜູ້ສ້າງ.** *"ເມື່ອຕົ້ນເດີມນັ້ນ ພຣະທຳຊົງເປັນຢູ່ແລ້ວ ພຣະທຳນັ້ນຊົງສະຖິດຢູ່ກັບພຣະເຈົ້າ ແລະ ພຣະທຳນັ້ນແຫຼະ ຊົງເປັນພຣະເຈົ້າ ພຣະເຈົ້າໄດ້ຊົງສ້າງທຸກສິ່ງຂຶ້ນໂດຍທາງພຣະຄຳ. ແລະພຣະທຳໄດ້ຊົງບັງເກີດເປັນມະນຸດ ແລະ ອາໄສຢູ່ທ່າມກາງເຮົາທັງຫຼາຍ; ເຮົາທັງຫຼາຍໄດ້ເຫັນສະຫງ່າຣາສີຂອງພຣະອົງ ຄືສະຫງ່າຣາສີທີ່ພຣະອົງໄດ້ຮັບໃນຖານະເປັນພຣະບຸດອົງດຽວຂອງພຣະເຈົ້າ,"* ຄັດອອກມາຈາກພຣະທຳ ໂຢຮັນ 1:1-14 *"ດ້ວຍວ່າ ໂດຍພຣະອົງນັ້ນພຣະເຈົ້າໄດ້ຊົງສ້າງສັບພະທຸກສິ່ງ ທັງໃນສະຫວັນ ແລະ ເທິງແຜ່ນດິນໂລກ, ສິ່ງທີ່ຕາເຫັນໄດ້ ແລະ ສິ່ງທີ່ຕາເຫັນບໍ່ໄດ້, ເປັນພຣະທີ່ນັ່ງ, ຫຼືອານຸພາບ, ຫຼືບັນດາຜູ້ຄອບຄອງ, ແລະບັນດາຜູ້ມີສິດອຳນາດທັງຫລາຍ - ພຣະເຈົ້າໄດ້ສ້າງສັບພະສິ່ງທັງໝົດນີ້ໂດຍທາງພຣະອົງ ແລະສຳລັບພຣະອົງ,"* ຄັດອອກມາຈາກພຣະທຳ ໂກໂລຊາຍ 1:16-17.

**ພຣະເຢຊູຄື "ເຮົາເປັນຜູ້ທີ່ເຮົາເປັນ".** ພຣະເຢຊູ, ທູດສະຫວັນຂອງພຣະເຈົ້າ, ໄດ້ເອີ້ນໂມເຊ ຈາກຝຸ່ມໄມ້ທີ່ມີໄຟລຸກໄໝ້ຢູ່ ໃນພຣະທຳ ອົບພະຍົບ 3 (ປະມານ 1,450 ປີກ່ອນ ຄສ) ແລະຊົງລະບຸວ່າ *"ເຮົາເປັນ"* ຜູ້ຍິ່ງໃຫຍ່. ໃນໂຢຮັນ ບົດ 8, ພຣະເຢຊູຊົງປະກາດວ່າ "ເຮົາເປັນ" ຜູ້ຍິ່ງໃຫຍ່ ຜູ້ຊົງເປັນຢູ່ກ່ອນອັບຣາຮາມ (ປະມານກ່ອນປີ 2,100 ກ່ອນ ຄສ) ແລະ ກ່ອນຊົນຊາດຢິວ. ຊາວຢິວເຫັນວ່ານັ້ນເປັນການອ້າງສິດ ໃນຄວາມເປັນພຣະເຈົ້າຂອງພຣະອົງ ຈຶ່ງເກັບກ້ອນຫີນຂຶ້ນມາເພື່ອຂ້າພຣະອົງ, ຕໍ່ມາພຣະເຢຊູຊົງກ່າວວ່າ *"ເຮົາກັບກັບພຣະເຈົ້າກໍເປັນອັນໜຶ່ງອັນດຽວກັນ,"* ໂຢຮັນ 10:30-31. ແລະ ພວກຢິວກໍເກັບເອົາກ້ອນຫີນຂຶ້ນມາອີກ.

**ພຣະເຢຊູໃນພຣະຄຳພີເດີມ.** ບໍ່ເຄີຍມີຜູ້ໃດເຫັນພຣະບິດາເຈົ້າມາກ່ອນ, ໂຢຮັນ 1:18, 6:46. ເຖິງຢ່າງໃດກໍຕາມ, ພຣະເຈົ້າໃນຖານະເປັນພຣະເຢຊູໄດ້ປະກົດຕົວຕໍ່ຫລາຍຄົນໃນສະໄໝຂອງພຣະສັນຍາເດີມກ່ອນທີ່ພຣະອົງຈະປະສູດໃນເມືອງເບັດເລເຮັມ. ພຣະອົງໄດ້ປະກົດຕົວເປັນທູດສະຫວັນຂອງພຣະເຈົ້າຕໍ່ນາງຮາກາໃນປະຖົມມະການ 16 & 21, ຕໍ່ໂມເຊໃນອົບພະຍົບ 3, ກັບກິເດໂອນໃນພວກຜູ້ປົກຄອງ 6, ແລະ ພໍ່ແມ່ຂອງແຊມຊັນໃນພວກຜູ້ປົກຄອງ 13. ພຣະເຢຊູຍັງປາກົດຕົວຕໍ່ອັບຣາຮາມໃນປະຖົມມະການ 18 & 22 ແລະ ກັບຢາໂຄບໃນປະຖົມມະການ 31 & 32. ແລະ ພຣະເຢຊູໄດ້ຖືກກ່າວເຖິງວ່າເປັນໜຶ່ງໃນຕຣີເອກະນຸພາບ ໃນເອຊາຢາ.48:12-19 (ຂຽນເມື່ອປະມານ 700 ປີ ກ່ອນ ຄ.ສ).

**ພຣະເຢຊູຊົງເປັນຜູ້ທີ່ຖືກທຳນວາຍໄວ້.** ຫຼາຍກວ່າ 300 ຄຳທຳນວາຍຂອງພຣະຄຳພີເດີມ, ຈາກຫຼາຍຮ້ອຍປີກ່ອນຫນ້ານີ້, ອະທິບາຍເຖິງການປະສູດ, ການມີຊີວິດ, ແລະການສິ້ນພຣະຊົນຂອງພຣະເຢຊູ. ບາງຄຳທຳນວາຍເຫຼົ່ານັ້ນຢູ່ໃນພຣະຄຳ ເພງສັນລະເສີນ ບົດທີ 22 ໄດ້ອະທິບາຍເຖິງການຖືກຄຶງເທິງໄມ້ກາງແຂນອັນໂຫດຮ້າຍຂອງພຣະອົງ (ຂຽນເມື່ອປະມານ 1,000 ປີກ່ອນ ຄ.ສ. ໃນສະໄໝທີ່ການຖືກແກ່ວງຫີນໃຫ້ຕາຍເປັນວິທີການປະຫານຊີວິດ) ຄວາມສຳເລັດຂອງຄຳທຳນວາຍໃນເພງສັນລະເສີນບົດທີ 22 ເຫຼົ່ານັ້ນ ໄດ້ຖືກບັນທຶກໄວ້ໃນ ມັດທາຍ ບົດທີ 27.

**ພຣະເຢຊູກາຍເປັນມະນຸດ.** ຜູ້ທຳນວາຍເອຊາຢາໄດ້ທຳນາຍວ່າ *"ມີເດັກນ້ອຍຄົນໜຶ່ງໄດ້ເກີດມາໃຫ້ພວກເຮົາ, ລູກຊາຍຜູ້ໜຶ່ງໄດ້ຖືກມອບໃຫ້ພວກເຮົາແລ້ວ,"* ເອຊາຢາ 9:6. ເອຊາຢາໄດ້ລະບຸວ່າ ພຣະອົງຄືພຣະເຈົ້າທີ່ຍິ່ງໃຫຍ່. ພຣະບຸດນິລັນດອນໄດ້ຖືກມອບໃຫ້ເປັນເດັກນ້ອຍປະສູດໃນເມືອງເບັດເລເຮັມ. ພຣະເຢຊູຊົງເປັນຢູ່ກ່ອນທີ່ພຣະອົງຈະເກີດມາ - ຈາກອະດີດຕະການ. ຄຳວ່າ "ພຣະບຸດຂອງພຣະເຈົ້າ" ອະທິບາຍເຖິງສະຖານະຂອງພຣະອົງຫຼາຍກວ່າການປະສູດ. ມັນບໍ່ໄດ້ຫມາຍຄວາມວ່າ ພຣະອົງຫາກໍເປັນຢູ່ຕອນປະສູດໃນເມືອງເບັດເລເຮັມ. ອັກຄະສາວົກໂປໂລຂຽນໄວ້ວ່າ, *"ເຈົ້າທັງຫລາຍຈົ່ງມີນໍ້າໃຈຕໍ່ກັນ ເໝືອນຢ່າງທີ່ມີໃນພຣະຄຣິດເຈົ້າເຢຊູ, ພຣະອົງຊົງສະພາບຂອງພຣະເຈົ້າ, ແຕ່ບໍ່ໄດ້ຊົງຖືວ່າການເທົ່າທຽມກັບພຣະເຈົ້ານັ້ນເປັນສິ່ງທີ່ຕ້ອງຢຶດຫວງໄວ້, ແຕ່ໄດ້ກັບຊົງຍອມສະຫລະ ແລະ ຊົງຮັບສະພາບຂ້ອຍຂ້າ, ຊົງຖືກຳເນີດເປັນມະນຸດ. ແລະເມື່ອຊົງປາກົດພຣະອົງໃນສະພາບມະນຸດແລ້ວ ພຣະອົງກໍຊົງຖ່ອມພຣະອົງລົງ ຍອມເຊື່ອຟັງຈົນເຖິງຄວາມມໍຣະນາ ຄືເຖິງຄວາມມໍຣະນາທີ່ໄມ້ກາງແຂນ,"* ຟີລິບປອຍ 2:5-8. ພຣະເຢຊູ ຊົງເປັນມະນຸດຢ່າງສົມບູນໃນຂະນະທີ່ພຣະອົງຊົງເປັນພຣະເຈົ້າ. ພຣະເຢຊູຜູ້ຊົງເປັນຢູ່ຊົ່ວນິລັນດອນ ໄດ້ສະເດັດລົງມາຈາກສະຫວັນເພື່ອບັງເກີດເປັນມະນຸດ, ໂຢຮັນ 3:13, 31, ໂຢຮັນ 6:33-38. ພຣະເຢຊູຊົງເປັນທັງພຣະເຈົ້າ ແລະ ມະນຸດໃນເວລາດຽວກັນ.

**ພຣະເຢຊູຊົງເຮັດການອັດສະຈັນຫຼາຍຢ່າງ.** ການອັດສະຈັນຫຼາຍຢ່າງຂອງພຣະອົງໄດ້ປະກົດຢູ່ໃນພຣະຄຳພີໃຫມ່. ມີສາມຢ່າງທີ່ສອດຂ້ອງກັບຄຳກ່າວອ້າງຂອງພຣະອົງ. ພຣະອົງໄດ້ລ້ຽງອາຫານແກ່ຄົນ 5,000 ຄົນຢ່າງອັດສະຈັນ ແລະ ຊົງກ່າວວ່າ, *"ເຮົາເປັນເຂົ້າຈີ່ແຫ່ງຊີວິດ,"* ໂຢຮັນ 6:35. ພຣະອົງໄດ້ປຽວຢາຮັກສາຄົນຕາບອດຄົນໜຶ່ງ ຫລັງຈາກຊົງກ່າວວ່າ, *"ຕາບໃດທີ່ເຮົາຍັງຢູ່ໃນໂລກ, ເຮົາກໍເປັນຄວາມສະຫວ່າງຂອງໂລກ,"* ໂຢຮັນ 9:1-8. ແລະ ພຣະອົງໄດ້ກ່າວວ່າ, *"ເຮົານີ້ແຫຼະ ເປັນເຫດໃຫ້ຄົນທັງປວງເປັນຄືນມາ ທັງເປັນຊີວິດ, ຜູ້ທີ່ວາງໃຈເຊື່ອໃນເຮົາ ເຖິງແມ່ນວ່າຕາຍໄປແລ້ວ ກໍຍັງມີຊີວິດຢູ່,"* 11:25. ແລ້ວພຣະເຢຊູກໍຍ່າງໄປທີ່ອຸບມຸງຂອງລາຊະໂລ ເພື່ອນຂອງພຣະອົງທີ່ຕາຍໄປໄດ້ສີ່ມື້ ແລະ ເອີ້ນລາວໃຫ້ມີຊີວິດຄືນມາ. ພຣະເຢຊູໄດ້ປຽວຢາຮັກສາຄົນເຈັບປ່ວຍ, ຄົນພິການ, ຄົນຫູໜວກ, ປາກກືກ, ຂີ້ທູດ, ແລະ ຄົນທີ່ມີວິນຍານຮ້າຍສິງຢູ່. ພຣະອົງຊົງໄດ້ປ່ຽນນໍ້າໃຫ້ເປັນເຫຼົ້າອະງຸ່ນ, ຊົງຍ່າງເທິງນໍ້າ, ແລະ ເຮັດໃຫ້ທະເລສະຫງົບລົງ. ມັດທາຍ 9:2-7 ບອກເຖິງກຸ່ມຄົນ ທີ່ພາຊາຍເປັນເປ້ຍມາຫາພຣະເຢຊູ.

LAO

ພຣະອົງເວົ້າກັບຊາຍຄົນນັ້ນວ່າ, *"ລູກເອີຍ ຈົ່ງຊື່ນໃຈເຖີດ ບາບຂອງເຈົ້າໄດ້ຮັບການໃຫ້ອະໄພແລ້ວ."* ແລ້ວທຳມະຈານບາງຄົນຄິດວ່າ ເປັນການໝິ່ນປະໝາດພຣະເຈົ້າ ເພາະວ່າມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດໃຫ້ອະໄພບາບໄດ້. ພຣະເຢຊູຊົງຖາມພວກເຂົາວ່າ, *"ອັນໃດງ່າຍກວ່າກັນ ທີ່ຈະເວົ້າວ່າ, ບາບກຳຂອງເຈົ້າໄດ້ຮັບການອະໄພແລ້ວ ຫລືຈະເວົ້າວ່າ ຈົ່ງລຸກຂຶ້ນ ແລະຍ່າງໄປ? ແຕ່ເຮົາຢາກຈະໃຫ້ພວກເຈົ້າຮູ້ວ່າ ບຸດມະນຸດມີສິດອຳນາດເທິງແຜ່ນດິນໂລກນີ້ ທີ່ຈະອະໄພບາບກຳໃຫ້ມະນຸດໄດ້ - ດັ່ງນັ້ນ ພຣະອົງຈຶ່ງເວົ້າກັບຄົນເປ້ຍນັ້ນວ່າ, ຈົ່ງລຸກຂຶ້ນຍົກເອົາບ່ອນນອນຂອງເຈົ້າ ແລະເມືອເຮືອນສາ. ຄົນເປ້ຍໄດ້ລຸກຂຶ້ນ ແລະເມືອເຮືອນຂອງຕົນ."*

**ພຣະເຢຊູໄດ້ພິສູດວ່າພຣະອົງຊົງເປັນພຣະເຈົ້າ.** ພຣະເຢຊູໄດ້ເຮັດໃຫ້ຄຳທຳນວາຍໃນພຣະຄຳພີເດີມເປັນຈິງ ກ່ຽວກັບການປະສູດ, ການມີຊີວິດ, ແລະການສິ້ນພຣະຊົນຂອງພຣະອົງ. ພຣະອົງໄດ້ເຮັດການອັດສະຈັນຫຼາຍຢ່າງເພື່ອສະແດງໃຫ້ເຫັນວ່າພຣະອົງເປັນພຣະເຈົ້າ. ພຣະອົງໄດ້ສອນດ້ວຍສິດທິອຳນາດ. *"ເມື່ອພຣະເຢຊູເຈົ້າໄດ້ຊົງກ່າວຄຳເຫຼົ່ານີ້ຈົບແລ້ວ, ປະຊາຊົນກໍປະຫລາດໃຈຫຼາຍໃນຄຳສັ່ງສອນຂອງພຣະອົງ; ພຣະອົງບໍ່ໄດ້ເປັນເໝືອນດັ່ງພວກທຳມະຈານ, ແຕ່ພຣະອົງໄດ້ສັ່ງສອນດ້ວຍຣິດອຳນາດ."* ມັດທາຍ 7:28-29. ແລະ ພຣະອົງດຳລົງຊີວິດໂດຍບໍ່ມີບາບ, ເຮັບເຣີ 4:15, 1 ເປໂຕ 2:22, 1 ໂຢຮັນ 3:5. ພຣະເຢຊູ, ໃນຖານະພຣະເຈົ້າຜູ້ເປັນມະນຸດທີ່ບໍ່ມີບາບ, ໄດ້ກາຍເປັນລູກແກະທີ່ສົມບູນແບບຂອງພຣະເຈົ້າ ໄດ້ຊົງສິ້ນພຣະຊົນເທິງໄມ້ກາງແຂນເພື່ອບາບຂອງພວກເຮົາ. *"ໃນພຣະກາຍຂອງພຣະອົງເອງ ພຣະອົງໄດ້ຊົງຮັບແບກບາບຂອງພວກເຮົາໄປເຖິງຕົ້ນໄມ້ນັ້ນ ເພື່ອພວກເຮົາຈະໄດ້ຕາຍເສຍຝ່າຍການບາບ ແລະມີຊີວິດຝ່າຍຄວາມຊອບທຳ, ດ້ວຍບາດແຜຂອງພຣະອົງ ເຈົ້າທັງຫລາຍກໍດີປົກກະຕິແລ້ວ."* 1 ເປໂຕ 2:24.

**ພຣະເຢຊູຖືກຄຶງເທິງໄມ້ກາງແຂນ ແລະ ຊົງເປັນຄືນມາຈາກຕາຍ.** *"ເພາະພວກເຈົ້າກໍຮູ້ຢູ່ແລ້ວວ່າ ພວກເຈົ້າຖືກໄຖ່ໃຫ້ເປັນອິດສະຫລະຈາກການດຳເນີນຊີວິດອັນບໍ່ມີປະໂຫຍດ ທີ່ສືບທອດມາຈາກບັນພະບຸລຸດຂອງພວກເຈົ້າ ບໍ່ແມ່ນໄຖ່ດ້ວຍສິ່ງຂອງທີ່ເສື່ອມສູນໄປ ເໝືອນດັ່ງເງິນຫລືຄຳ ແຕ່ຊົງໄຖ່ດ້ວຍພຣະໂລຫິດ ອັນຊົງມີຄ່າຂອງພຣະຄຣິດ ເໝືອນດັ່ງເລືອດລູກແກະ ທີ່ບໍ່ມີຕຳໜິ ຫລືຮອຍດ່າງ,"* 1 ເປໂຕ 1:18-19 *"ແລ້ວພວກເຂົາກໍໄດ້ປະຫານພຣະອົງເສຍ ໂດຍຕອກຄຶງໄວ້ທີ່ໄມ້ກາງແຂນ. ແຕ່ພຣະເຈົ້າໄດ້ຊົງບັນດານໃຫ້ພຣະອົງເປັນຄືນມາໃນວັນຖ້ວນສາມ ແລະຊົງບັນດານໃຫ້ພຣະອົງປາກົດແຈ້ງ - ຜູ້ທຳນວາຍທຸກຄົນກໍໄດ້ກ່າວເຖິງພຣະອົງໂດຍປະກາດວ່າ ທຸກຄົນທີ່ເຊື່ອໃນພຣະອົງ ຈະໄດ້ຮັບການອະໄພບາບກຳໂດຍນາມຊື່ຂອງພຣະອົງ."* ກິດຈະການ 10:39-40, 43. ພຣະເຢຊູເປັນຄືນມາຈາກອຸມົງຝັງສົບ ແລະ ມີພະຍານຫຼາຍຄົນໄດ້ເຫັນພຣະອົງ ກ່ອນທີ່ພຣະອົງຈະສະເດັດຂຶ້ນໄປຍັງສະຫວັນສະຖານ.

**ພຣະເຢຊູຄືທາງດຽວເຖິງພຣະບິດາເຈົ້າ.** ພຣະເຢຊູຊົງກ່າວວ່າ, *"ເຮົານີ້ແຫຼະ ເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາເຈົ້າໄດ້ ນອກຈາກມາທາງເຮົາ,"* ໂຢຮັນ 14:6 ອັກຄະສາວົກໂປໂລໄດ້ກ່າວວ່າ, *"ໃນຜູ້ອື່ນຄວາມລອດພົ້ນບໍ່ມີ ດ້ວຍວ່າ, ບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າ ທີ່ຊົງປະທານແກ່ມະນຸດ ເພື່ອໃຫ້ເຮົາທັງຫລາຍຕ້ອງໄດ້ພົ້ນ." ກິດຈະການ 4:12.* ອັກຄະສາວົກໂປໂລໄດ້ຂຽນໄວ້, *"ດ້ວຍວ່າ, ມີພຣະເຈົ້າອົງດຽວ ແລະມີຜູ້ກາງແຕ່ຜູ້ດຽວ ລະຫວ່າງພຣະເຈົ້າກັບມະນຸດ, ຄືພຣະຄຣິດເຈົ້າເຢຊູຜູ້ຊົງສະພາບເປັນມະນຸດ, ຜູ້ທີ່ໄດ້ສະຫລະພຣະອົງເອງ ເພື່ອເປັນຄ່າໄຖ່ມະນຸດສະໂລກທຸກຄົນ."* 1 ຕີໂມທຽວ 2:5-6 . ແນວທາງຂອງພຣະເຢຊູ ໃນການໄປເຖິງພຣະເຈົ້າແມ່ນແຕກຕ່າງຈາກສາສະໜາອື່ນໆທັງຫມົດ. ພວກເຂົາບໍ່ມີທາງອອກຕໍ່ບັນຫາຄວາມບາບຂອງພວກເຮົາ. ພວກເຂົາສອນວ່າ ຖ້າທ່ານເຮັດດີຕາມນິຍາມຄວາມດີ ແລະ ຄວາມຊົ່ວທີ່ແຕກຕ່າງກັນຂອງພວກເຂົາ, ພະເຈົ້າຂອງພວກເຂົາອາດຈະລະເວັ້ນບາບຂອງທ່ານ ແລະອະນຸຍາດໃຫ້ທ່ານເຂົ້າໄປໃນສະຫວັນ. ວິທີການຂອງພຣະເຢຊູແມ່ນດ້ວຍການເຊື່ອໃນພຣະອົງ ບາບຂອງທ່ານໄດ້ຮັບການຊຳລະເທິງໄມ້ກາງແຂນ ແລະ ໄດ້ຮັບການໃຫ້ອະໄພແລ້ວ. ເມື່ອມີພຣະເຢຊູທ່ານຈະໄປສະຫວັນພ້ອມກັບການໃຫ້ອະໄພແລ້ວ. *"ເພາະວ່າ ພຣະເຈົ້າຊົງຮັກໂລກຫລາຍທີ່ສຸດ ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕະຫລອດໄປເປັນນິດ."* ໂຢຮັນ 3:16.

**ພຣະເຢຊູຈະສະເດັດກັບມາ.** ພຣະເຢຊູຊົງກ່າວວ່າ, *"ໃນຜາສາດພຣະບິດາເຈົ້າຂອງເຮົາມີທີ່ຢູ່ຫລາຍບ່ອນ ຖ້າບໍ່ມີ ເຮົາຄົງໄດ້ບອກພວກເຈົ້າແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳລັບເຈົ້າທັງຫລາຍ. ເມື່ອເຮົາໄປຈັດຕຽມບ່ອນໄວ້ສຳລັບພວກເຈົ້າແລ້ວ ເຮົາຈະກັບຄືນມາຮັບເອົາພວກເຈົ້າໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດ ພວກເຈົ້າກໍຈະຢູ່ທີ່ນັ້ນເໝືອນກັນ."* ໂຢຮັນ 14:2-3. ແລະໃນຕອນທ້າຍຂອງພຣະຄຳພີ, ພຣະເຢຊູຊົງກ່າວວ່າ, *"ແນ່ນອນ ເຮົາຈະມາໃນໄວໆນີ້* [ໂດຍທັນໃດ]." ອັກຄະສາວົກ ໂຢຮັນໄດ້ຕື່ມໃສ່ວ່າ, *"ອາແມນ ອົງພຣະເຢຊູເຈົ້າເຊີນສະເດັດມາເທີ້ນ."* ພຣະນິມິດ 22:20-21. ຖ້າພຣະເຢຊູສະເດັດກັບມາວັນນີ້, ທ່ານພ້ອມທີ່ຈະພົບກັບພຣະອົງບໍ? ເຂົ້າເບິ່ງເວັບໄຊ້ທ www.Gospel316.org ເພື່ອໃຫ້ແນ່ໃຈວ່າທ່ານພ້ອມ ໂດຍການເຊື່ອໃນພຣະເຢຊູຄຣິດ ແລະໄດ້ຮັບການອະໄພບາບຈາກພຣະເຈົ້າ.

**ພຣະເຢຊູຊົງເປັນພຣະເຈົ້າຈາກອະດີດຕະການ ຈົນເຖິງນິລັນດອນ.**

**ຈົ່ງປະຫຼາດໃຈໃນການອັດສະຈັນ ເມື່ອໄດ້ຍິນພຣະນາມຂອງພຣະອົງ!**

---

*ພຣະເຢຊູແມ່ນໃຜ?* © 2025 ໂດຍ John D. Morris III ຈັດພິມມາໂດຍ Acts One Eight. ທ່ານສາມາດພິມ, ສຳເນົາ, ໂພສ, ອີເມວ ຫຼື ສົ່ງຂໍ້ຄວາມໄດ້ໂດຍບໍ່ເສຍຄ່າ, ໂດຍມີເນື້ອຫາທີ່ບໍ່ປ່ຽນແປງພ້ອມແນັບຄຳຊີ້ແຈງສະບັບນີ້ໄປດ້ວຍ. ທ່ານສາມາດເພີ່ມຊື່ຂອງພັນທະກິດ ຫຼື ຄຣິສຕະຈັກ ຫຼືໂລໂກ້ຂອງທ່ານຢູ່ເທິງສຸດຂອງໜ້າທີໜຶ່ງ ແລະເພີ່ມຂໍ້ມູນການຕິດຕໍ່ຂອງທ່ານຢູ່ເທິງເສັ້ນສີເຂັ້ມໃກ້ກັບລຸ່ມສຸດຂອງໜ້າທີສອງ. Jesus316 ແມ່ນອີງໃສ່ພຣະຄຳພີສັກສິດເທົ່ານັ້ນ. ມັນມີຢູ່ເພື່ອຊ່ວຍໃຫ້ຜູ້ຄົນເຂົ້າມາມີຄວາມເຊື່ອໃນພຣະເຢຊູຄຣິດ ແລະ ໃຫ້ເຕີບໂຕເປັນສາວົກຂອງພຣະອົງ. ທ່ານສາມາດສົ່ງອີເມວຫາ Acts One Eight (ເປັນພາສາອັງກິດຖ້າເປັນໄປໄດ້) ໄປທີ່: Hello@Mail316.org. ການບໍລິການແປພາສາສຳລັບ ສະບັບທີ່ບໍ່ແມ່ນພາສາອັງກິດແມ່ນໄດ້ຮັບການຈັດຕຽມໃຫ້ໂດຍ www.ChristianLingua.com. *ພຣະເຢຊູແມ່ນໃຜ?* ແມ່ນສາມາດໃຊ້ໄດ້ແລ້ວໃນ 48 ພາສາໂດຍບໍ່ເສຍຄ່າໃດໆຢູ່ໃນ www.Jesus316.org. ພຣະຄຳພີໃນສະບັບພາສາອັງກິດແມ່ນມາຈາກ The Lockman Foundations New American Standard Bible 1995. ຂໍ້ພະຄຳພີທີ່ຍົກມາໃນສະບັບການແປນີ້ແມ່ນມາຈາກ United Bible Societies.